# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ວັນທີ 25 ເດືອນ ທັນວາ 2005 ( 25 - 12- 2005 )

## ເປັນຫຍັງຈຶ່ງແມ່ນພຣະເຢຊູ

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້** ( ມັດທາຍ 1: 18-25; 2:1-2, 11 )

**ຄວາມຈິງໃນພຣະຄັມພີ** ພຣະເຢຊູຄືພຣະຜູ້ໂຜດໃຫ້ພົ້ນທີ່ໄດ້ສົ່ງມາຈາກພຣະເຈົ້າເພື່ອທຸກໆຄົນແລະທຸກບ່ອນທຸກທີ່ຢູ່ໃນໂລກ.

**ຜົນສະທ້ອນຕໍ່ຊີວິດ** ບົດຮຽນນີ້ຖືກແຕ່ງຂຶ້ນມາເພື່ອຊ່ອຍໃຫ້ທ່ານເກີດມີຄວາມຫ່ວງໃຍເກີດຂຶ້ນຢູ່ໃນຕົວທ່ານເອງເພື່ອຊ່ອຍໃຫ້ທ່ານໄດ້ໃຊ້ທິດທາງທີ່ເປັນແບບຢ່າງໄວ້ໃນການປະກາດຂ່າວປະເສີດ; ຄືຜູ້ທີ່ຈະເຮັດໃຫ້ພຣະປະສົງໃນພາລະກິດຂອງພຣະຄຣິດໄດ້ຮັບຜົນສໍາເຣັດດ້ວຍ:

- ບອກແຈ້ງວ່າເປັນຫຍັງພຣະເຢຊູຈຶ່ງແມ່ນພຣະຜູ້ໂຜດໃຫ້ພົ້ນຂອງຄົນທັງຫລາຍໃນທຸກທີ່ໃນໂລກ
- ບອກແຈ້ງໃຫ້ມີນໍ້າໃຈເສັຽສະລະຄືຕັ້ງຫມັ້ນໃນສັນຍາທີ່ຜູກພັນກັບອົງພຣະເຢຊູແລະໃນປະກາດທີ່ໄດ້ຊົງສັ່ງໄວ້

## ສຶກສາພຣະຄັມພີ

" ທ່ານອະທິຖານຕໍ່ພຣະເຢຊູ, ແຕ່ຂ້າພະເຈົ້າອະທິຖານຕໍ່ພຣະເຈົ້າຜູ້ຊົງເມດຕາ " ຄົນຈີນຜູ້ນຶ່ງອະທິຖານຕໍ່ພຣະເຢຊູຄືພຣະບຸດ, ແຕ່ພວກເຮົາຄາໂຕລິກອະທິຖານຕໍ່ມາຣີອາພຣະມານດາ-ຈາກນັ້ນ, ໃນຄອບຄົວ, ຜູ້ໃດທີ່ມີການນັບຖືຫລາຍກວ່າ, ພຣະມານດາຫລືພຣະບຸດ?" ຄົນຟີລິບປິນທີ່ນັບຖືໂຣແມນຄາໂຕລິກຜູ້ນຶ່ງຖາມຂ້າພະເຈົ້າ. ຄົນອິສລາມມີຄວາມເຊື່ອວ່າພຣະເຢຊູເປັນຜູ້ປະກາດ, ສ່ວນຄົນຮິນດູທີ່ນັບຖືພຣະເຈົ້າຫລາຍອົງເຊື່ອວ່າພຣະເຢຊູເປັນພຽງຄຣູສອນທີ່ອັນຕະແຕ່ບໍ່ແມ່ນພຣະຜູ້ໂຜດໃຫ້ພົ້ນ. ໃນບັນຫາຄວາມນຶກຄິດແລະຄວາມເຊື່ອທີ່ຂັດແຍ້ງ, ຈະມີຄວາມເຂັ້ມຂຸ້ນຍິ່ງຂຶ້ນເມື່ອຄົນແຕ່ລະກຸ່ມທີ່ກ່າວມານີ້ເຂົ້າມາຕັ້ງກຸ່ມສົນທະນາກັນ ແລະໃຫ້ຄວາມຄິດເຫັນໃນເຣື່ອງຂອງພຣະເຢຊູ ມີຫລາຍຄົນລົງຄວາມເຫັນວ່າສາສນາໃດກໍດີເທົ່າກັນຫມົດ. ແຕ່ພຣະຄັມພີໄດ້ບອກຄວາມຈິງເຖິງສິ່ງພິເສດທີ່ມີຢູ່ໃນເຢຊູໄທນາຊາເຣັດຜູ້ນີ້ຄື: ພຣະອົງຊົງເປັນພຣະຜູ້ໂຜດໃຫ້ພົ້ນທີໄດ້ສົ່ງມາຈາກພຣະເຈົ້າ, ທຸກຄົນກໍຕ້ອງການພຣະອົງເຖິງພວກເຂົາຈະເຂົ້າໃຈຫລືບໍ່ກໍຕາມ, ແລະຄວາມຈິງກໍຈະປາກົດໃນອີກບໍ່ດົນນີ້.

## 1. ພຣະເຢຊູ: ແມ່ນພຣະເຈົ້າ-ມະນຸດ ( ມັດທາຍ 1:18-20 )

ເຣື່ອງລາວການກໍາເນີດຂອງພຣະເຢຊູສະແດງໃຫ້ພວກເຮົາໄດ້ຮູ້ເຖິງຜູ້ທີ່ຈະໂຜດໃຫ້ພົ້ນ, ມັດທາຍແລະຜູ້ຂຽນພຣະທັມຜູ້ອື່ນໆໄດ້ຂຽນເລົ່າເຣື່ອງຂອງພຣະເຢຊູທີ່ບໍ່ໄດ້ບອກການຕັ້ງເວລາ, ແຈ້ງແລະງ່າຍໆ. ມັດທາຍໄດ້ຕອບຄໍາຖາມຄື: ເຢຊູໄທນາຊາເຣັດຜູ້ນີ້ມາຈາກໃສ? ແມ່ນຫຍັງທີ່ເປັນສິ່ງພິເສດໃນຕົວຂອງພຣະອົງ? ເປັນຫຍັງຈຶ່ງບໍ່ຄືກັນກັບມະນຸດທັມດາ, ຫລືການເກີດຂອງພຣະອົງຈຶ່ງບໍ່ຄືກັບຄົນອື່ນ? **ການເກີດຂອງພຣະເຢຊູຄຣິດແມ່ນ**ເກີດຢ່າງຫນ້າອັສຈັນທີ່ສຸດເພາະພຣະເຈົ້າໄດ້ສະແດງໃຫ້ເກີດຂຶ້ນແລະໄດ້ບັນທຶກໄວ້ໃນປະຫວັດສາດເພື່ອຮັກສາຊົນຊາດອິສຣາເອນໄວ້, ດັ່ງນັ້ນພຣະເຈົ້າຈຶ່ງເຮັດໃຫ້ການເກີດຂອງພຣະເຢຊູ ໄທນາຊາເຣັດໃຫ້ມີຈຸດພິເສດ.

ນາງມາຣີອາໄດ້ຫມັ້ນກັບໂຢເຊບ, ແລະການຫມັ້ນຫມາຍຂອງຊາວຢິວຕາມປະເພນີກໍຄືການຜູກມັດຄືກັນກັບການແຕ່ງງານແລະທີ່ຈະອອກຈາກນີ້ມີພຽງການຢ່າຮ້າງຕາມປະເພນີເທົ່ານັ້ນ. ກ່ອນທີ່ໂຢເຊບແລະມີການຮ່ວມສໍາພັນທາງເພດ ແຕ່ນາງກໍຖືພາກ່ອນ. ໃນຫມູ່ບ້ານກາລິເລແມ່ນເປັນເມືອງນ້ອຍທີ່ຢູ່ໃນແຂວງນາຊາເຣັດ, ຍິງທີ່ບໍ່ທັນໄດ້

ແຕ່ງງານແຕ່ມີທ້ອງກ່ອນແມ່ນຖືວ່າເປັນຄວາມຜິດໜັກທີ່ສຸດ. ໂຢເຊບຈະສລູບໄດ້ວ່າມາຣີອາບໍ່ສັດຊື່, ແຕ່ໂຢເຊບເປັນຄົນສິນທັມແລະບໍ່ຕ້ອງການທີ່ຈະເຮັດໃຫ້ນາງຕ້ອງອັບອາຍຕໍ່ໜ້າສາທາຣະນະ, ຄືດ້ວຍການຢ່າຮ້າງ, ເພາະຈະເຮັດສິ່ງນີ້ໄດ້ດ້ວຍພຽງມີພະຍານຫລັກຖານ 2 ຄົນເທົ່ານັ້ນ.

ມາຣີອາບໍ່ໄດ້ຜິດຕໍ່ສັນຍາກັບໂຢເຊບ, ຕາມຄວາມຈິງໃນພຣະຄັມພີໄດ້ກ່າວໄວ້ດັ່ງນີ້ຄືຜູ້ປະກາດພຣະທັມໄດ້ບອກໄວ້ວ່າທີ່ນາງໄດ້ຖືພາໃນເທື່ອນີ້ແມ່ນເກີດຂຶ້ນດ້ວຍພຣະວິນຍານບໍຣິສຸດ. ມີເທວະດາຕົນນຶ່ງ..ໄດ້ປາກົດແກ່ໂຢເຊບໃນໂຢເຊບໃນຄວາມຝັນໃນເຣື່ອງເດັກທີ່ຈະເກີດມານັ້ນບໍ່ແມ່ນມະນຸດທັມດາ; ແມ່ນສິ່ງມະຫັສຈັນຂອງພຣະເຢຊູທີ່ຈະເກີດມາເປັນມະນຸດແລະຈະເຮັດພາຣະກິດຂອງພຣະອົງເພື່ອມະນຸດຈະໄດ້ເຂົ້າໃຈດ້ວຍຣິດອຳນາດແລະຕາມພຣະປະສົງຂອງພຣະເຈົ້າ.

ໃນເວລາທີ່ອາດາມແລະເອວາໄດ້ເຮັດບາບຄັ້ງແລກ, ມີມະນຸດໄດ້ເກີດຂຶ້ນມາຍ້ອນມີ " ແກ່ນ " ໄດ້ເກີດຂຶ້ນໃນຜູ້ຍິງ, ( ປຖມກ. 3:15 ). ໃນການແປໃນພຣະຄັມຂໍ້ນີ້, ຄຳວ່າ " ແກ່ນ " ແມ່ນການເຮັດໃຫ້ເກີດຄືມາຈາກຜູ້ຊາຍບໍ່ແມ່ນມາຈາກຜູ້ຍິງ, ແລະພຣະເຈົ້າໄດ້ບອກໄວ້ລ່ວງໜ້າແລ້ວໃນເຣື່ອງຂອງຍິງພົມມະຈາຣີ, ພຣະອົງຈະປະສູດມາໃນເວລາແລະທາງຕາມທີ່ພຣະອົງໄດ້ຊົງກຳໜົດໄວ້ແລ້ວ. ພຣະເຈົ້າໄດ້ຊົງຖືກຳເນີດມາໃນພຣະນາມຂອງພຣະເຢໃນສະພາບຄວາມເປັນມະນຸດແລະຈະທຳພາຣະກິດຂອງພຣະອົງໃຫ້ສຳເຣັດ ຄືໄດ້ຊົງປະທານຄວາມລອດພົ້ນຊຶ່ງມາຈາກພຣະເຈົ້າເທົ່ານັ້ນ. ໂປໂລໄດ້ຂຽນວ່າ: " ແຕ່ເມື່ອຄົບກຳນົດແລ້ວ, ພຣະເຈົ້າກໍຈະຊົງໃຊ້ພຣະບຸດຂອງພຣະອົງມາ, ຊົງປະສູດຈາກຜູ້ຍິງ... ເພື່ອໃຫ້ພວກເຮົາໄດ້ຖານະເປັນບຸດ." ( ຄລຕ. 4: 4-5 )

ໃນສະພາບການແວດລ້ອມທີ່ເກີດຂຶ້ນໃນຂນະທີ່ພຣະເຢຊູຊົງຖືກຳເນີດແມ່ນຢັ້ງຢືນເຖິງຄວາມຈິງທີ່ບໍ່ມີມະນຸດຜູ້ໃດຄື ແລະເຮັດໃຫ້ຄຣິສຕຽນມີການດຳຣົງຊີວິດທີ່ມີຄວາມແຕກຕ່າງຈາກສາສນາອື່ນໆ. ພຣະຄັມພີໄດ້ບອກເຖິງການເປັນພຣະເຈົ້າທີ່ຊົງສະພາບເປັນມະນຸດໃນເວລາດຽວກັນຢ່າງເຕັມບໍຣິບູນ. ສິ່ງລຶກລັບແລະມະຫັສຈັນເຮັດໃຫ້ພວກເຮົາບໍ່ໄດ້ມີຄວາມລັ່ງເລໃຈໃນການສິດສອນແລະປະກາດ. ເຖິງຢ່າງໃດກໍຕາມ, ຄວາມຈິງພື້ນຖານຄວາມໝາຍທີ່ແທ້ຈິງກໍຄືພຣະອົງໄດ້ສະເດັດມາໃນສະພາບມະນຸດແລະເປັນແສງສວ່າງແລະຊົງໄຖ່ດ້ວຍພຣະອົງເອງ. ພຣະອົງບໍ່ໄດ້ສົ່ງທູດສວັນແຕ່ຊົງສະເດັດລົງມາດ້ວຍຕົວເອງ. ການກຳເນີດຂອງພຣະເຢຊູ, ຊີວິດ, ການວາຍພຣະຊົນ ແລະການຊົງຟື້ນຄືນມາທັງໝົດແມ່ນບໍ່ສາມາດຈະອະທິບາຍໄດ້ໃນເວລາຫລາຍກວ່າສິ່ງມະຫັສຈັນທີ່ພຣະເຈົ້າໄດ້ຊົງສຳແດງໃຫ້ເຫັນ.

## ໒. <u>ພຣະເຢຊູ: ແມ່ນພຣະຜູ້ໂຜດໃຫ້ພົ້ນ</u> ( ມັດທາຍ 1:໒1 )

ເທວະດາໄດ້ມາແຈ້ງຂ່າວໃຫ້ໂຢເຊບວ່າມາຣີອາຈະປະສູດບຸດຊາຍຄົນນຶ່ງ ແລະເຂົາຈະຖວາຍພຣະນາມແກ່ທ່ານວ່າ ເຢຊູ, ແລະໄດ້ບອກໄວ້ໃນພຣະຄັມເດີມຄືຫຍໍ້ມາຈາກ ໂຢຊວຍ ທີ່ແປຄວາມໝາຍ " ຢາເວ ແມ່ນຄວາມລອດພົ້ນ " ຫລື " ພຣະເຈົ້າຊົງເປັນຄວາມລອດພົ້ນ ". ຊື່ໂຢຊວຍແມ່ນຊື່ຂອງຄົນທັມມະດາໃນສມັຍນັ້ນ, ແຕ່ກັບພຣະຄຣິດ, ແມ່ນເປັນຊື່ພິເສດແລະມີຄວາມໝາຍດັ່ງນີ້: ພຣະອົງໄດ້ສະເດັດມາເພື່ອໄຖ່ໄພພົນຂອງພຣະອົງຈາກຄວາມບາບ. ເທວະດາໄດ້ມາປາກົດຕໍ່ມາຣີອາແລະບອກຢ່າງດຽວກັນກັບໂຢເຊບຄື, " ຈົ່ງຕັ້ງຊື່ບຸດນັ້ນວ່າ **ເຢຊູ** " ( ລູກາ 1: 31 ).

ມະນຸດທຸກຄົນທີ່ອາສັຍຢູ່ໃນໂລກນີ້ແມ່ນຕ້ອງການຄວາມລອດພົ້ນທັງໝົດ- ແລະຜູ້ໂຜດໃຫ້ພົ້ນນັ້ນແມ່ນພຣະເຈົ້າເປັນຜູ້ຊົງເລືອກ. ເພາະວ່າທຸກຄົນກໍເປັນຄົນຜິດບາບກ່ອນທີ່ພຣະເຈົ້າຈະຊົງໂຜດໃຫ້ພົ້ນດ້ວຍຄວາມບໍຣິສຸດຂອງພຣະອົງ. ໃນວັນນຶ່ງທຸກຄົນຫລັງຈາກທີ່ຕາຍຈາກໂລກນີ້ໄປແລ້ວຈິດວິນຍານຈະໄດ້ໄປຢືນຢູ່ຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າເພື່ອຈະໄດ້ລາຍງານການກະທຳຂອງຕົນເອງຕອນທີ່ຍັງມີຊີວິດຢູ່, ແລະພຣະຄັມພີຂຽນໄວ້ " ມະນຸດຖືກຊົງກຳໜົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວແລະຫລັງຈາກນັ້ນຈະມີການຊົງພິພາກສາສັນໃດ ( ເຮັບເຣີ 9:໒7 ) ຄຳຖາມທີ່ຈະຖາມໃນວັນນັ້ນຈະບໍ່ອະນຸຍາດໃຫ້ປຽບທຽບວ່າທ່ານໄດ້ເຮັດຫລາຍກວ່າຄົນອື່ນ ໆ, ແຕ່ທາງສະພາບຂອງຈິດວິນຍານແມ່ນມີຄວາມພໍດີໃນການທີ່ຈະເຂົ້າໄປໃນແຜ່ນດິນສວັນອັນບໍຣິສຸດຂອງພຣະເຈົ້າ. ພຣະຄັມພີກ່າວດັ່ງນີ້: " ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ " ( ໂຣມ. 3:23 ). ບໍ່ມີຜູ້ໃດເປັນຜູ້ບໍຣິສຸດແທ້

ແລະພວກເຮົາແຕ່ລະຄົນກໍຕ້ອງການທີ່ຈະໄດ້ຮັບການອະພັຍຈາກພຣະເຈົ້ານຳກັນທັງໝົດ. ພວກເຮົາບໍ່ສາມາດທີ່ຈະຊ່ວຍຕົວເອງໃຫ້ລອດພົ້ນຫລືເຮັດສິ່ງຕອບແທນເພື່ອໃຫ້ໄດ້ມາຊຶ່ງຄວາມລອດພົ້ນນັ້ນບໍ່ໄດ້.

ພຣະຄຣິດໄດ້ສະເດັດເຂົ້າມາໃນໂລກນີ້ເພື່ອຈະເຮັດໃຫ້ຂ່າວປະເສີດໄດ້ຄົງຢູ່ເພື່ອເຊັ່ນລູກຫລານເພາະພຣະອົງນີ້ແຫລະຄືພຣະຜູ້ໂຜດໃຫ້ພົ້ນທີ່ພວກເຮົາຕ້ອງການ. ດ້ວຍພຣະນາມພຣະເຢຊູ, ບໍ່ພຽງທຳພາຣະກິດຂອງພຣະຄຣິດດັ່ງທີ່ໄດ້ມີການບອກໄວ້ລ່ວງໜ້າແລ້ວ, ແຕ່ຍັງຈະເຮັດໃຫ້ຄົນທຸກຍຸກທີ່ເກີດມາຕາມຫລັງຈະໄດ້ເຂົ້າໃຈພຣະຜູ້ໂຜດໃຫ້ພົ້ນແລະຮ້ອງອອກພຣະນາມຂອງພຣະອົງອີກທັງມີຄວາມເຊື່ອເພື່ອຈະໄດ້ຄວາມລອດພົ້ນ. ພຣະວິນຍານບໍຣິສຸດໄດ້ຊົງຊ່ວຍໃຫ້ຄົນໃນທຸກໆ ຊາດໃຫ້ມີຄວາມເຂົ້າໃຈດ້ວຍຈິດສຳນຶກໃນເຣື່ອງຂອງພຣະເຢຊູໄທນາຊາເຣັດທີ່ມີຄວາມສາມາດເປັນພຣະຜູ້ຊ່ວຍໃຫ້ພົ້ນສ່ວນຕົວຂອງແຕ່ລະຄົນໄດ້. ໂດຍການຍອມຫັນໜີຈາກຄວາມບາບ, ຍອມສາຣະພາບວ່າມີຄວາມຕ້ອງການໆໃຫ້ອະພັຍ, ແລະເຊື່ອແລະໄວ້ວາງໃຈໃນການຍອມຖວາຍຊີວິດຄືການຍອມຕາຍແລະການຟື້ນຄືນພຣະຊົນ, ພວກເຮົາຈະສາມາດຮັບເອົາພຣະອົງຄືເປັນພຣະຜູ້ໂຜດໃຫ້ພົ້ນຂອງພວກເຮົາ.

## 3. <u>ພຣະເຢຊູ: ພຣະເຈົ້າສະຖິດຢູ່ນຳພວກເຮົາ</u> (ມັດທາຍ 1:22-25)

ພຣະເຢຊູບໍ່ເປັນພຽງແຕ່ພຣະເຈົ້າຢ່າງເຕັມບໍຣິບູນເທົ່ານັ້ນ ແຕ່ເປັນມະນຸດທີ່ເຕັມບໍຣິບູນເຊັ່ນກັນ, ເປັນພຣະຜູ້ໂຜດໃຫ້ພົ້ນ, ພຣະອົງຍັງສະຖິດຢູ່ນຳພວກເຮົາອີກດ້ວຍ. ໃນພຣະຄັມພີເດີມໄດ້ເອີ້ນພຣະນາມຂອງພຣະອົງເປັນສ່ວນຕົວໃນເວລາທີ່ພຣະອົງຈະບັງເກີດຄື **ເອັມມານູເອນ, ທີ່ມີຄວາມໝາຍວ່າ "ພຣະເຈົ້າຊົງສະຖິດຢູ່ກັບເຮົາທັງຫລາຍ"** ໃນພຣະທັມມັດທາຍໄດ້ຕີຄວາມໝາຍເຊື່ອມໂຍງມາຈາກຜູ້ປະກາດພຣະທັມເອຊາຢາ( ອຊຢ. 7: 14 ), ໄດ້ບອກເຖິງຄວາມຈິງທີ່ໄດ້ເຮັດໃຫ້ເກີດຢ່າງຄົບຖ້ວນແລ້ວໃນເວລາທີ່ເພິ່ນມີຊີວິດຢູ່; ຄືໄດ້ຮັບການຊົງດົນໃຈໃຫ້ຜູ້ປະກາດພຣະທັມໄດ້ຂຽນບອກເຣື່ອງລາວການເກີດຂອງພຣະເຢຊູຄຣິດໄວ້ລ່ວງໜ້າແລ້ວ- **ຍິງພົມມະຈາຣີຈະຖືພາແລະອອກລູກມາເປັນຊາຍ.** ໂຢເຊບໄດ້ປະຕິບັດຕາມຄຳຂອງເທວະດາບອກແລະໄດ້ແຕ່ງງານກັບນາງມາລີອາ, ແຕ່ບໍ່ໄດ້ສົມສູ່ຢູ່ກັບນາງຈົນປະສູດບຸດຜູ້ຊາຍແລ້ວ.

"ພຣະເຈົ້າສະຖິດຢູ່ກັບເຮົາ" ມີຄວາມໝາຍວ່າພຣະເຈົ້າຊົງມີສ່ວນໃນການດຳຣົງຊີວິດຢູ່ໃນໂລກນີ້. ໃນໂລກປັດຈຸບັນນີ້ແມ່ນມີຈຸດສົນໃຈທີ່ຈະເປັນຄົນທັນສມັຍຄືມີວັດຖຸທີ່ວິວັທນາການໃຫມ່ຢູ່ຮອບຂ້າງແທນການພັທນາຂ້າງໃນຄືຈິດວິນຍານທີ່ທຸກຄົນເບິ່ງບໍ່ເຫັນ..ມີການຫົວເຍາະເຍີ້ຍຕໍ່ຄວາມຄິດໃນເຣື່ອງຈິດວິນຍານ, ແຕ່ມີຄົນອີກບາງຈຳພວກອາດຈະໄດ້ຮັບຜົນປະໂຫຍດທີ່ອາດຈະເປັນໄປໄດ້ຖ້າມີການຝຶກຝົນ,ແຕ່ສລູບລວມແລ້ວຈະເປັນນິມິດທີ່ດີຖ້າຈະມີການແຍກອອກຣະຫວ່າງດ້ານຮ່າງກາຍຝ່າຍເນື້ອໜັງແລະໂລກຂອງຈິດວິນຍານ. ພວກເຂົາບໍ່ໄດ້ເຊື່ອວ່າພຣະເຈົ້າໄດ້ຊົງສຳແດງຣິດອຳນາດໃນຊີວິດຂອງມະນຸດ; ແທນທີ່ຄືຖ້າພຣະອົງຫາກເປັນພຣະຜູ້ຊົງສ້າງສິ່ງທັງໝົດ, ພຣະອົງຈະຢູ່ຫ່າງໄກຈາກແລະບໍ່ມີຄວາມຫ່ວງໃຍພວກເຮົາໄດ້ແນວໃດ. ການຊົງບັງເກີດຂອງພຣະເຢຊູຄຣິດແມ່ນໄດ້ປາກົດເຖິງຄວາມຈິງທີ່ກົງກັນຂ້າມຄື: ພຣະເຈົ້າຊົງມີຄວາມຫ່ວງໃຍແລະພຣະອົງສະຖິດຢູ່ກັບພວກເຮົາແລະຢູ່ໃນພຣະເຢຊູຄຣິດ. ພວກເຮົາໄດ້ໃຊ້ຄຣິສມາດຄັ້ງແລກຢູ່ໃນຕ່າງແດນ ຄືການອອກໄປເປັນຜູ້ປະກາດໃນຕ່າງປະເທດຄືຢູ່ໃນຂອບເຂດປະເທດຟີລິບປິນ, ຫ່າງໄກຈາກຄອບຄົວແລະໄກຈາກການສລອງຄຣິສມາດທີ່ແທ້ຈິງທີ່ມີຢູ່ໃນ ອາເມຣິກາ. ທົດແທນດ້ວຍການໃຊ້ເວລາຂອງຄວາມງຽບສງົບກັບຄອບຄົວ, ພວກເຮົາມີການປະຊຸມກັບພວກສະມາຊິກໂບດ, ການຊຸມນຸມຂອງຄົນໜຸ່ມ, ແລະການມ່ວນຊື່ນຂອງເພື່ອນບ້ານຄືຄົນຟີລິບປິນເອງ- ການສລອງຄຣິສມາດເຂົາຄືມີການຈູດດອກໄຟລວມຢູ່ດ້ວຍ. ພວກເຮົາແມ່ນຄິດຮອດການສລອງແບບອະເມຣິກາທີ່ສຸດ, ພວກເຮົາມີພຽງສຸດຈິດໃຈໃສ່ໃນຄຳທີ່ວ່າ: ພຣະເຈົ້າຈະສະຖິດຢູ່ກັບພວກເຮົາບໍ່ວ່າເຮົາຈະແຫ່ງຫົນໃດກໍຕາມ! ການໂຄສະນາສິນຄ້າໃນຍາມຄຣິສມາດ, ທີ່ເຕັມໄປດ້ວຍສີສັນແລະການເພີ້ມເຕີມໃນການໂຄສະນາສິນຄ້າຈາກບໍຣິສັດຕ່າງໆ ສາມາດເປັນສາເຫດໃຫ້ພວກເຮົາຜິດຫວັງທີ່ຈະເຫັນຄວາມງົດງາມຄືຄວາມໝາຍເຖິງຄວາມຈິງທີ່ງ່າຍໆ.

ໃນຂນະທີ່ແຕ່ລະຄົນໃນພວກເຮົາເກີດຄວາມຮູ້ສຶກລືມ, ແລະຫລົບຫລີກ, ແລະບໍ່ມີຄວາມສົນໃຈ. ການປະກາດ

ເຖິງການຊົງມາບັງເກີດຂອງພຣະຄຣິດຄືພຣະເຈົ້າມີຄວາມຫ່ວງໃຍພວກເຮົາທຸກໆ ຊີວິດ. ພຣະເຈົ້າຮູ້ເຖິງພື້ນຖານການທີ່ຈະດຳຣົງຊີວິດຢູ່ທ້າມກາງສິ່ງນີ້, ຮູ້ເຖິງຄວາມໜັກໜ່ວງທີ່ພວກເຮົາກຳລັງແບກຢູ່, ດ້ວຍການສະແດງສີໜ້າທີ່ຊື່ນບານ, ແລະເກັບຄວາມຢ້ານກົວທີ່ເຮັດໃຫ້ພວກເຮົາສະເດີດຕື່ນຂື້ນໃນກາງຄືນ. ພຣະອົງໄດ້ຊົງປະທານສິ່ງທີ່ຈະສາມາດເສີມພະລັງໃຫ້ເຮົາແລະເຮັດໃຫ້ພວກເຮົາເກີດມີຄວາມຫວັງໃນມື້ອື່ນ.

## 4. <u>ພຣະເຢຊູ: ຄືຜູ້ທີ່ເຮົາສົມຄວນນະມັສການ</u> ( ມັດທາຍ 2:1-2,11 )

ພຣະເຢຊູບໍ່ເປັນພຽງແຕ່ພຣະເຈົ້າຢ່າງເຕັມບໍຣິບູນເທົ່ານັ້ນ, ແຕ່ເປັນມະນຸດທີ່ເຕັມບໍຣິບູນເຊັ່ນກັນ, ,ເປັນພຣະຜູ້ໂຜດໃຫ້ພົ້ນ, ເປັນພຣະເຈົ້າທີ່ສະຖິດຢູ່ກັບພວກເຮົາ, ແລະຍັງເປັນຜູ້ທີ່ເຮົາສົມຄວນນະມັສການ. **ພວກນັກປາກຈາກພາກຕາເວັນອອກ**ບາງທີອາດຈະແມ່ນປະເທດອີຣັກ ຫລື ອີຣານ ໃນປັດຈຸບັນນີ້, ທີ່ບໍ່ໄດ້ມານະມັສການພຣະເຢຊູໃນເວລາທີ່ພຣະອົງປະສູດແລ້ວ, ແຕ່ມາເຖິງໂດຍບໍ່ໄດ້ມີການນັດໝາຍໄວ້ຄື**ມາເຖິງກຸງເຢຣູຊາເລັມໃນ**ເວລາ 1 ຫລື 2 ປີຕໍ່ມາຫລັງຈາກພຣະເຢຊູເກີດແລ້ວ. ພວກໂຫຣາຈານທີ່ຮຽນວິຊາເຣື່ອງຂອງສວັນ, ນັກປາດ ພວກນີ້ມີການກ່າວເຖິງເປັນທີ່ຮູ້ດີໃນພຣະທັມຜູ້ທຳນວາຍໃນພຣະຄັມພີເດີມ, ຄືພຣະທັມຈົດເຊັນບັນຊີ 24:17, " ຈະມີດາວດວງນຶ່ງມາຈາກເຊື້ອສາຍຂອງຢາໂຄບ, ແລະຈະເປັນເຄື່ອງໝາຍແຫ່ງອຳນາດທີ່ມາຈາກອິສຣາເອນ" ພວກເຮົາຄຳນວນເຖິງເຣື່ອງນີ້ປະມານສອງສາມປີຕໍ່ມາຈາກການຮຽນຮູ້ທີ່ໄດ້ຄຳນວນແລ້ວ. **ກະສັດເຮໂຣດ**ຜູ້ຍິ່ງໃຫຍ່, ທັງເປັນຜູ້ທີ່ໂຫດຫ້ຽມແລະມັກກິດຂີ່ຂົ່ມເຫງ, ທີ່ໄດ້ສວັນນະຄົດໄປໃນ 4 ປີກ່ອນຄຣິສຕະສັກຣາດແມ່ນຍັງເປັນເຈົ້າຊີວິດຢູ່ໃນເວລາທີ່ພຣະເຢຊູຊົງມາບັງເກີດ. ແລະບາງທີ, ພຣະເຢຊູອາດຈະຊົງບັງເກີດໃນລະຫວ່າງ 6-4 ກ່ອນຄິສຕະສັກຣາດ.

ພຣະເຈົ້າໄດ້ດົນໃຈໃຫ້ພວກນັກປາດພວກນັ້ນໄດ້ໄປຢ້ຽມຢາມທີ່ບ້ານເບັດເລເຮັມໂດຍຕາມພຣະຄັມພີໄດ້ກ່າວໄວ້ຄື**ເດີນທາງໄປຕາມແສງດາວທາງທິດຕາເວັນອອກ.** ພວກເຂົາໄດ້ເດີນທາງເປັນລະຍະຍາວໄກເພື່ອຈະໄປ**ຂາບໄຫວ້ນະມັສການພຣະອົງ,** ພຣະກຸມມານຄືພຣະຄຣິດໂດຍຕາມເວລາທີ່ພວກໂຫຣາຈານໄດ້ເດີນທາງໄປເຖິງບ້ານເບັດເລເຮັມ ມາຣີອາ, ໂຢເຊບແລະພຣະເຢຊູບໍ່ໄດ້ຢູ່ໃນຄອກສັດນັ້ນແລ້ວ**ແຕ່ຢູ່ໃນບ້ານ.** ແລະພວກເຂົາກໍໄດ້ຂາບໄຫວ້ນະມັສການພຣະຄຣິດກໍຄືກັນກັບພວກເຮົາຂາບໄຫວ້ພຣະອົງ, ແລະຍັງໄດ້ຖວາຍຂອງຂວັນໃຫ້ຄື: **ຄຳ** ມີຄວາມໝາຍເຖິງການເປັນເຊື້ອກະສັດ, **ກຳຍານ**, ແມ່ນຂອງທີ່ມີກິ່ນຫອມໝາຍເຖິງການອະທິຖານດ້ວຍໃຈຍິນດີ, **ຢາງໄມ້ຫອມ,** ແມ່ນນ້ຳມັນຫອມສຳລັບໄວ້ພົມຄົນຕາຍ. ຂອງຂວັນນີ້ອາດຈະໃຫ້ໄວ້ເພື່ອຊ່ວຍໃນການໃຊ້ຈ່າຍໃນຂນະທີ່ມາຣີອາແລະໂຢເຊບຈະເດີນທາງຫລົບໜີອອກໄປທີ່ອີຢີບ.

ການນະມັສການມີຄວາມໝາຍເຖິງການປະກາດໃຫ້ຮູ້ເຖິງຄຸນຄ່າຂອງຄວາມດີງາມແລະຄວາມຮັບຜິດຊອບໂດຍອີງໃສ່ທັງສອງຢ່າງນີ້, ໂດຍການຕອບສນອງດ້ວຍຄວາມເຊື່ອແລະມີການສະແດງອອກໃຫ້ເຫັນດ້ວຍການກະທຳກະທຳທີ່ຟັງຄວາມ. ພວກເຮົານະມັສການພຣະຄຣິສດເພື່ອໃຫ້ຄົນອື່ນເຫັນເຖິງຄວາມຈິງທີ່ພຣະອົງຊົງເປັນຢູ່: ຄືເປັນພຣະຜູ້ຊ່ອຍໃຫ້ລອດ, ເປັນເພື່ອນ, ແລະເປັນພຣະເຈົ້າຂອງພວກເຮົາ.

( ອຸປຖັມໂດຍ ລາວຊາວເທີນ ແບັບຕິສສັມພັນ-www. sbf.org ອ.ຜ. ແປແລະຮຽບຮຽງ )